ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງເຊກອງ

ເລກທີ 11 /ຈຂ,ຊກ
ເຊກອງ, ວັນທີ 09.10.2018

# ຄຳສັ່ງ
## ວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບຂອງການມີສ່ວນຮ່ວມ ໃນການຄຸ້ມຄອງ ປົກປັກຮັກສາເສັ້ນທາງຫຼວງທຸກປະເພດ ແລະ ເທດສະບານເມືອງ, ຜັງເມືອງຂອງແຂວງເຊກອງ.

ເຖິງ: ເຈົ້າເມືອງ 4 ຕົວເມືອງ, ພະແນກການ - ອົງການທຽບເທົ່າ, ສອງກຳລັງປະກອບອາວຸດ, ຜູ້ອຳນວຍການສະຖາບັນການສຶກສາ, ລັດວິສາຫະກິດ, ອົງການຈັດຕັ້ງມະຫາຊົນ, ບ້ານ ແລະ ປະຊາຊົນທຸກຊັ້ນຄົນ ອ້ອມຂ້າງແຂວງເຊກອງ.

- ອີງຕາມ: ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ພາກທີ III, ໝວດ 4 ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້ານະຄອນຫຼວງ.
- ອີງຕາມ: ກົດໝາຍວ່າດ້ວຍການຜັງເມືອງ ( ສະບັບປັບປຸງ ) ຂອງ ສປປ ລາວ ສະບັບເລກທີ 40/ສພຊ, ລົງວັນທີ 16 ພະຈິກ 2017 ທີ່ໄດ້ລະບຸໄວ້ໃນ ມາດຕາ 5 ແລະ ມາດຕາ 6.
- ອີງຕາມ: ກົດໝາຍວ່າດ້ວຍທາງຫຼວງແຫ່ງຊາດ ( ສະບັບປັບປຸງ ) ສະບັບເລກທີ 021/ສພຊ, ລົງວັນທີ 08 ພະຈິກ 2016 ທີ່ໄດ້ລະບຸໄວ້ໃນ ມາດຕາ 6 ແລະ ມາດຕາ 41 ໝວດທີ V.
- ອີງຕາມ: ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012 ທີ່ໄດ້ລະບຸໄວ້ໃນ ມາດຕາ 3, ມາດຕາ 6 ແລະ ມາດຕາ 7.
- ອີງຕາມ: ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 188/ນຍ, ລົງວັນທີ 03/7/2007 ວ່າດ້ວຍການປັບໃໝ ແລະ ມາດຕະການຕ່າງໆ ຕໍ່ຜູ້ລະເມີດລະບຽບກົດໝາຍ ກ່ຽວກັບການຈາລະຈອນທາງບົກ, ການຂົນສົ່ງທາງບົກ ແລະ ການປົກປັກຮັກສາທາງຫລວງ.
- ອີງຕາມ: ໜັງສືສະເໜີຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງເຊກອງ ສະບັບເລກທີ 1539/ຍທຂ, ລົງວັນທີ 27 ກັນຍາ 2018.

ໃນໄລຍະໜຶ່ງທົດສະວັດຜ່ານມາ ເຫັນວ່າເສດຖະກິດຂອງແຂວງເຊກອງ ໂດຍລວມມີທ່ວງທ່າຂະຫຍາຍຕົວຢ່າງຕໍ່ເນື່ອງ ປະຊາຊົນມີລາຍຮັບເພີ່ມຂຶ້ນ ເຮັດໃຫ້ຊີວິດການເປັນຢູ່ນັບມື້ນັບດີຂຶ້ນ ບັນດາການກໍ່ສ້າງຕຶກອາຄານ, ເຮືອນຢູ່, ຕະຫຼາດ, ກິດຈະການສາທາລະນະປະໂຫຍດ, ສາທາລະນູປະໂພກ ແລະ ຈຳນວນຍານພະຫະນະກໍ່ເພີ່ມຂຶ້ນຢ່າງໄວວາ. ສ່ອງແສງເຖິງເສດຖະກິດຂະຫຍາຍຕົວ ອັນເປັນຜົນໃຫ້ແຂວງເຊກອງ ຂອງພວກເຮົາ ມີການພັດທະນາໃນທຸກດ້ານ

ດ້ວຍຈັງຫວະທີ່ໄວສົມຄວນ. ຍ້ອນວ່າພັກໄດ້ກຳນົດນະໂຍບາຍ ທີ່ເອົາຂະແໜງໂຍທາທິການ ແລະ ຂົນສົ່ງ ເປັນປາຍແຫຼມຂອງເສດຖະກິດ ຈຶ່ງໄດ້ເອົາໃຈໃສ່ ແລະ ນຳໃຊ້ງົບປະມານຢ່າງຫຼວງຫລາຍ ລົງທຶນໃສ່ການກໍ່ສ້າງພື້ນຖານໂຄງລ່າງ ເປັນຕົ້ນແມ່ນ: ການກໍ່ສ້າງເສັ້ນທາງຫລວງແຫ່ງຊາດ, ເສັ້ນທາງຫລວງຂອງແຂວງ, ເສັ້ນທາງຫລວງເມືອງ ເສັ້ນທາງໃນຕົວເມືອງ, ເສັ້ນທາງຊົນນະບົດ ແລະ ເສັ້ນທາງສະເພາະ, ນອກນັ້ນ; ກໍຍັງໄດ້ນຳໃຊ້ງົບປະມານ ເຂົ້າໃນການວາງແຜນຜັງເມືອງ ເພື່ອຫັນເອົາຕົວເມືອງເປັນໃຈກາງພັດທະນາຊົນນະບົດ ເຊິ່ງມາຮອດປີ 2015 ທັງ 4 ເມືອງ ຂອງແຂວງເຊກອງ ກໍ່ໄດ້ຮັບການວາງແຜນຜັງຕົວເມືອງແລ້ວ ເຊິ່ງຈະກາຍເປັນພື້ນຖານການພັດທະນາຕົວເມືອງ ແລະ ເປັນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ ຂອງແຂວງເຊກອງ ກໍ່ຄືເສດຖະກິດລວມຂອງຊາດ.

ເຖິງຢ່າງໃດກໍ່ດີ, ຄຽງຄູ່ກັບຜົນສຳເລັດທີ່ກ່າວມາຂ້າງເທິງນັ້ນ, ພວກເຮົາຍັງເຫັນວ່າ ການລົງທຶນພັດທະນາຂອງລັດ ຍັງບໍ່ມີຄວາມຍືນຍົງ ຍ້ອນຂາດການມີສ່ວນຮ່ວມຂອງທຸກພາກສ່ວນ ເປັນຕົ້ນແມ່ນ ປະຊາຊົນ, ນັກທຸລະກິດ ແລະ ພະນັກງານລັດຈຳນວນໜຶ່ງ ໃນການຄຸ້ມຄອງປົກປັກຮັກສາການນຳໃຊ້ເສັ້ນທາງ ແລະ ການປະຕິບັດການກໍ່ສ້າງ ໃຫ້ສອດຄ່ອງຕາມຜັງເມືອງ ເຮັດໃຫ້ການພັດທະນາຍັງມີສິ່ງຫຍໍ້ທໍ້ຫລາຍຢ່າງຕາມມາ ເຊັ່ນ: ບັນຫາການອະນາໄມຖະໜົນຫົນທາງ, ການຂົນສົ່ງນ້ຳໜັກເກີນສົ່ງຜົນໃຫ້ເສັ້ນທາງເປ່ເພ, ການກຳຈັດສິ່ງເສດເຫລືອຈາກກິດຈະການກໍ່ສ້າງ, ຂີ້ເຫຍື້ອ, ນ້ຳຖ້ວມຂັງບາງຈຸດ, ການຈອດ ລົດຊະຊາຍ, ການຂາຍເຄື່ອງຕາມທາງຄົນຍ່າງ, ການປຸກສ້າງທີ່ບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງຜັງເມືອງ, ການຂຸດດິນ-ຖົມດິນ, ການຕໍ່ເຕີມເທີບເງີບ, ການຕິດຕັ້ງເສົາໄຟຟ້າ, ເສົາໂທລະສັບ, ສາຍໂທລະສັບ, ສາຍໂທລະພາບ, ທໍ່ນ້ຳປະປາ, ການຕິດຕັ້ງປ້າຍຊະຊາຍບໍ່ໄປຕາມຜັງເມືອງ. ບັນຫາອອກໃບຕາດິນກວມເອົາເຂດສະຫງວນຂອງທາງ ແລະ ເສັ້ນແຖວປຸກສ້າງ, ເຖິງແມ່ນວ່າໄລຍະຜ່ານມາໄດ້ມີການໂຄສະນາ, ການຈັດຕັ້ງນຳພາແກ້ໄຂຢ່າງຕໍ່ເນື່ອງ ແຕ່ກໍ່ຍັງເຫັນວ່າມີການລະເມີດຢ່າງແຜ່ຫລາຍ ຂາດການມີສ່ວນຮ່ວມໃນການຄຸ້ມຄອງ ແລະ ພັດທະນາຕົວເມືອງ ແລະ ການຈັດຕັ້ງປະຕິບັດກົດໝາຍຢ່າງເຄັ່ງຄັດ ສິ່ງຜົນໃຫ້ການນຳໃຊ້ບັນດາເສັ້ນທາງບໍ່ມີຄວາມຍືນຍົງ ແລະ ການພັດທະນາຕົວເມືອງບໍ່ມີປະສິດທິຜົນ ຊຶ່ງສົ່ງຜົນສະທ້ອນຕໍ່ຄວາມຈະເລີນຂອງປະຊາຊົນຊາວແຂວງເຊກອງ, ສົ່ງຜົນກະທົບຕໍ່ພາບພົດ ແລະ ການທ່ອງທ່ຽວ ກໍ່ຄືການສ້າງແຫລ່ງລາຍຮັບຂອງແຂວງ.

ເພື່ອຢັບຢັ້ງ ແລະ ແກ້ໄຂບັນຫາດັ່ງກ່າວ ໃຫ້ນັບມື້ນັບຫລຸດລົງ ແລະ ເຮັດໃຫ້ແຂວງເຊກອງ ກາຍເປັນເມືອງໜ້າຢູ່ ມີການພັດທະນາທີ່ຍືນຍົງ ແລະ ເພື່ອເປັນການສະໜັບສະໜູນການເປີດປີທ່ອງທ່ຽວຂອງແຂວງເຊກອງ ໃນປີ 2018 ກໍ່ຄືການປະຕິບັດຕາມມະຕິກອງປະຊຸມຄະນະປະຈຳພັກແຂວງ, ການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຂອງພັກ ຄັ້ງທີ X, ມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງແຂວງເຊກອງ ໃຫ້ມີປະສິດທິຜົນ.

## ເຈົ້າແຂວງ ອອກຄຳສັ່ງ:

ໃຫ້ທຸກຕົວເມືອງ, ພະແນກການ - ອົງການທຽບເທົ່າ, ກົມກອງ 2 ກຳລັງ, ສະຖາບັນການສຶກສາ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ, ບ້ານ, ປະຊາຊົນ ໃນທຸກຂອບເຂດແຂວງເຊກອງ ໃຫ້ເພີ່ມທະວີການມີສ່ວນຮ່ວມໃນການຮັກສາຄວາມສະອາດ, ການອະນາໄມຖະໜົນຫົນທາງ ແລະ ການຈັດສັນຄວາມເປັນລະບຽບຮຽບຮ້ອຍ ເປັນຕົ້ນຕາມເສັ້ນທາງ, ໂດຍໃຫ້ສຸມໃສ່ເສັ້ນທາງຫລວງແຫ່ງຊາດ ແລະ ເສັ້ນທາງໃນຕົວເມືອງ ເລີ່ມແຕ່ ເດືອນຕຸລາ 2018 ເປັນຕົ້ນໄປ ຢ່າງເປັນຂະບວນຟົດຟື້ນ ແລະ ຕໍ່ເນື່ອງ ເຊິ່ງເປົ້າໝາຍຂອງການມີສ່ວນຮ່ວມ ໃນການຄຸ້ມຄອງປົກປັກຮັກສາເສັ້ນທາງຫຼວງທຸກປະເພດ ແລະ ເທດສະບານເມືອງ, ຜັງເມືອງ ຂອງແຂວງເຊກອງ ແມ່ນມີດັ່ງນີ້:

I. ການມີສ່ວນຮ່ວມຂອງທຸກພາກສ່ວນ.

- ການມີສ່ວນຮ່ວມດ້ານ ກົດໝາຍ ແລະ ລະບຽບການ.

1. ພັນທະຂອງພົນລະເມືອງລາວກ່ຽວກັບວຽກງານທາງຫຼວງ: ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີຊັນຊາດ ທີ່ອາໄສ ຢູ່ ສປປ ລາວ ລ້ວນແຕ່ມີພັນທະເຄົາລົບ ແລະ ປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບທາງຫຼວງ, ປະກອບສ່ວນເຂົ້າໃນການກໍ່ສ້າງ, ການບູລະນະຮັກສາ ແລະ ການສ້ອມແປງທາງຫຼວງ ລວມທັງກິດຈະການປ້ອງກັນຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍໃນການສັນຈອນ, ການຮັກສາຄວາມສະອາດ, ຄວາມສວຍງາມ ແລະ ປົກປັກຮັກສາສິ່ງແວດລ້ອມ.

2. ພັນທະຂອງພົນລະເມືອງລາວກ່ຽວກັບການຜັງເມືອງ: ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີຊັນຊາດ ທີ່ອາໄສ ຢູ່ ສປປ ລາວລ້ວນແຕ່ມີພັນທະເຄົາລົບ ແລະ ປະຕິບັດກົດໝາຍວ່າດ້ວຍການຜັງເມືອງ (ສະບັບປັບປຸງ), ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດຜັງເມືອງ, ປົກປັກຮັກສາສິ່ງແວດລ້ອມ ແລະ ວັດທະນະທຳ, ປະຫວັດສາດ ແລະ ເອກະລັກທາງດ້ານສະຖາປັດຕະຍະກຳ, ສິລະປະກຳ ແລະ ພູມມີທັດຂອງຕົວເມືອງ ໃຫ້ມີຄວາມສວຍງາມ ແລະ ຍືນຍົງ.

3. ປະຊາຊົນທຸກຊັ້ນຄົນຕ້ອງເປັນເຈົ້າການປຸກລະດົມ ແລະ ສະກັດກັ້ນບັນດາພຶດຕິກຳທີ່ເປັນການລະເມີດຕໍ່ກົດໝາຍ ລະບຽບການທີ່ກ່ຽວຂ້ອງ ແລະ ເປັນເຈົ້າການຊ່ວຍພາກລັດປຸກລະດົມດ ເຜີຍແຜ່ວຽກງານການຄຸ້ມຄອງບັນດາເສັ້ນທາງ ແລະ ການເຄຫາ - ຜັງເມືອງ ໃຫ້ແຜ່ຫລາຍຢ່າງທົ່ວເຖິງ.

- ການມີສ່ວນຮ່ວມ ດ້ານວຽກງານ ຂົວ-ທາງ ແລະ ເຄຫາ-ຜັງເມືອງ ແລະ ສິ່ງແວດລ້ອມ.

1. ໃຫ້ອຳນາດການປົກຄອງເມືອງ 4 ຕົວເມືອງ ຊີ້ນຳອຳນາດການປົກຄອງບ້ານ ແລະ ທຸກພາກສ່ວນ ຈົ່ງພ້ອມກັນຈັດຕັ້ງປະຕິບັດການຄຸ້ມຄອງປົກປັກຮັກສາ ບູລະນະຮັກສາ ແລະ ຊົມໃຊ້ເສັ້ນທາງໃນ 4 ຕົວເມືອງ ຕາມເສັ້ນທາງຕ່າງໆ ພ້ອມກັນປະຕິບັດກົດໝາຍວ່າດ້ວຍທາງຫລວງ ( ສະບັບປັບປຸງ ) ຢ່າງເຂັ້ມງວດຕາມເສັ້ນທາງຕ່າງໆລະອຽດມີດັ່ງລຸ່ມນີ້:

- ເສັ້ນທາງຫລວງແຫ່ງຊາດ.
- ເສັ້ນທາງຫລວງແຂວງ.
- ເສັ້ນທາງຫລວງເມືອງ.
- ເສັ້ນທາງໃນຕົວເມືອງ.
- ເສັ້ນທາງຊົນນະບົດ.
- ເສັ້ນທາງສະເພາະ.

2. ອະນາໄມເສັ້ນທາງ, ຮັກສາຄວາມສະອາດຕາມເສັ້ນທາງ, ກຳຈັດສິ່ງເສດເຫຼືອ, ສິ່ງຮົກເຮື້ອ, ນ້ຳເປື້ອນ, ນ້ຳເສຍທຸກສຳນັກງານ - ອົງການ, ທຸກບ້ານ, ທຸກເຮືອນ, ສະຖານທີ່ສາທາລະນະ, ຕະຫຼາດ, ສະຖານີລົດໂດຍສານ, ຕະຄອງ, ຮ່ອງນ້ຳ ແລະ ແມ່ນ້ຳລຳເຊ.

3. ປັບປຸງສ້ອມແປງຄືນໃໝ່, ອະນາໄມເຮືອນຊານບ້ານຊ່ອງ, ອອກແຮງງານອະນາໄມ ຕຶກອາຄານ ແລະ ຕັດຫຍ້າຂອງພາກສ່ວນຕົນ ໃຫ້ມີຄວາມຈົບງາມ ແລະ ສະອາດງາມຕາ.

4. ທຸກການກໍ່ສ້າງຕ້ອງມີການຂໍອະນຸຍາດຈາກອົງການຄຸ້ມຄອງຜັງເມືອງ, ເອົາໃຈໃສ່ຮັກສາເຂດສະຫງວນຂອງທາງ, ປະຕິບັດເສັ້ນແຖວການປຸກສ້າງ ຕາມລະບຽບການຄຸ້ມຄອງການປຸກສ້າງ ເລກທີ 7681/ຄຂປກ ແລະ ລະບຽບການວາງແຜນຜັງເມືອງ ເລກທີ 1366/ຄຂປກ.

5. ຮື້ຖອນສິ່ງປຸກສ້າງ ແລະ ສິ່ງຕໍ່ເຕີມຕາມແຄມທາງ (ຕຸບ, ເທີບ, ເງິບ) ການຕິດຕັ້ງປ້າຍໂຄສະນາ, ປ້າຍແນະນຳ ທີ່ບໍ່ໄດ້ຂໍອະນຸຍາດຈາກອົງການຄຸ້ມຄອງຜັງເມືອງ, ແກ້ໄຂສິ່ງກີດຂວາງ ຕາມທາງຄົນຍ່າງ ແລະ ເຂດສາທາລະນະ ຖືກຕ້ອງກັບແຜນຜັງເມືອງ.

6. ການກໍ່ສ້າງອາຄານແຄມທາງ ຕ້ອງເອົາໃຈໃສ່ຮັກສາຄວາມສະອາດ ຄວາມເປັນລະບຽບຮຽບຮ້ອຍໃນຂອບເຂດໂຄງການກໍ່ສ້າງ, ກິດຈະການກໍ່ສ້າງຕ້ອງມີການກັ້ນ ແລະ ປົກປິດສິ່ງປຸກສ້າງຖືກຕ້ອງຕາມຫຼັກການກໍ່ສ້າງໃນຕົວເມືອງ, ການກອງຫີນ ກອງຊາຍແຄມທາງ ເມື່ອເປິເປື້ອນຕ້ອງມີການອະນາໄມ.

7. ການຈອດລົດຊະຊາຍ ທີ່ຂັດກັບມາດຕາ 1 ແລະ ມາດຕາ 6 ຂອງກົດໝາຍວ່າດ້ວຍການຜັງເມືອງ (ສະບັບປັບປຸງ) ສະບັບເລກທີ 40/ສພຊ, ລົງວັນທີ 16 ພະຈິກ 2017 ແລະ ລະບຽບການທີ່ກ່ຽວຂ້ອງ.

**II. ຂໍ້ຫ້າມສຳລັບ ວຽກງານ ຂົວ - ທາງ.**

ໃຫ້ອຳນາດການປົກຄອງເມືອງ 4 ຕົວເມືອງ, ພະແນກການ-ອົງການທຽບເທົ່າ, ກົມກອງ 2 ກຳລັງ, ຜູ້ອຳນວຍການສະຖາບັນການສຶກສາ, ວິສາຫະກິດ, ອົງການຈັດຕັ້ງສັງຄົມ, ບ້ານ, ປະຊາຊົນ ໃນທຸກຂອບເຂດແຂວງເຊກອງ ປະຕິບັດຂໍ້ຫ້າມ ຕາມມາດຕາ 70 ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ຂອງກົດໝາຍວ່າດ້ວຍທາງຫລວງ (ສະບັບປັບປຸງ) ແລະ ຂໍ້ຕົກລົງຂອງລັດຖະມົນຕີວ່າການ ວ່າດ້ວຍການປົກປັກຮັກສາ ແລະ ບູລະນະທາງຫລວງ ເລກທີ 17179/ຍທຂ ມີລາຍລະອຽດ ດັ່ງນີ້:

1. ຫ້າມດຳເນີນທຸລະກິດ ກ່ຽວກັບທາງຫລວງ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງ.

2. ຫ້າມປຸກສ້າງ, ກໍ່ສ້າງກິດຈະການໃດໜຶ່ງ ທີ່ເປັນກິດຈະການຊົ່ວຄາວ ຫຼື ຖາວອນ ໃນຂອບເຂດສະຫງວນທາງ ເປັນຕົ້ນ ການກໍ່ເຮືອນ, ອາຄານ ແລະ ບ່ອນຈອດລົດ ກວມຮ່ອງລະບາຍນ້ຳ.

3. ຫ້າມຕັ້ງເສົາໄຟຟ້າ, ເສົາໂທລະຄົມມະນາຄົມ, ປ້າຍໂຄສະນາ ຢູ່ຂອບເຂດສະຫງວນຂອງທາງ.

4. ຫ້າມຂຸດດິນແຄມທາງ ຫລື ຂຸດໜ້າທາງ ເພື່ອວາງທໍ່ນ້ຳປະປາ, ທໍ່ສາຍໄຟຟ້າ, ທໍ່ສາຍໂທລະຄົມມະນາຄົມ, ທໍ່ຊົນລະປະທານ, ທໍ່ລະບາຍນ້ຳໄປຕາມແຄມທາງ, ຂ້າມທາງລອດພື້ນ ຫລື ຂຸດເປັນຮ່ອງຊົນລະປະທານ ໃນຂອບເຂດສະຫງວນຂອງທາງ.

5. ຫ້າມຂຸດ, ຈົກ ຫລື ຕັກເອົາດິນ, ຫີນ, ຫີນແຮ່, ດິນຊາຍ ແລະ ວັດສະດຸອື່ນ ຢູ່ທາງ ຫລື ຂອບເຂດສະຫງວນຂອງທາງ.

6. ຫ້າມຂົນສິ່ງວັດສະດຸກໍ່ສ້າງ ຫຼື ສິ່ງອື່ນໆ ເປັນຕົ້ນ: ດິນ, ແຮ່, ຫີນປູນ ແລະ ຊາຍ ທີ່ສ້າງຄວາມເປິະເປື້ອນໃສ່ທາງຫລວງ.

7. ຫ້າມບັນທຸກນ້ຳໜັກເກີນ ແລ່ນເທິງໜ້າທາງຫລວງແຕ່ລະປະເພດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງທາງຫລວງ.

8. ຫ້າມຂັດຂວາງ, ບໍ່ອຳນວຍຄວາມສະດວກ ຫຼື ບໍ່ໃຫ້ການຮ່ວມມືແກ່ການການດຳເນີນການກໍ່ສ້າງ, ບູລະນະຮັກສາ ແລະ ການສ້ອມແປງ.

9. ຫ້າມມ້າງເພ, ທຳລາຍໂຄງປະກອບ, ສິ່ງປະກອບ, ສິ່ງປ້ອງກັນຄວາມປອດໄພ ຂອງທາງຫລວງ ແລະ ຕັດຕົ້ນໄມ້ຕາມເຂດສະຫງວນຂອງທາງ.

10. ຫ້າມຊື້ຂາຍ ສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພ ຂອງທາງຫລວງ ເຊັ່ນ: ຝາປິດຮູລະບາຍນ້ຳ, ຂຸມພັກນ້ຳ, ສົ້ນສອນຂົວ, ຫຼັກປ້າຍສັນຍານ ແລະ ອື່ນໆ.

11. ຫ້າມຖົມຮ່ອງລະບາຍນ້ຳແຄມທາງ, ຖົມດິນ ສູງກວ່າໜ້າທາງ, ໃສ່ໜ້າທາງ ແລະ ວາງສິ່ງກີດຂວາງຕ່າງໆ, ຖອກນ້ຳມັນ, ດັງໄຟໃສ່ທາງ, ຖິ້ມສິ່ງເປິເປື້ອນໃສ່ໜ້າທາງ, ຮ່ອງລະບາຍນ້ຳ, ເຂດສະຫງວນ ແລະ ເຂດປອດໄພ ຂອງທາງຫລວງ.

12. ຫ້າມປູກຕົ້ນໄມ້ກິນໝາກ ຫຼື ຕົ້ນໄມ້ໃຫຍ່ ທີ່ກວມເອົາເຂດສະຫງວນ, ຂອບເຂດຄວາມສູງການສັນຈອນ ເຊິ່ງມີຄວາມສ່ຽງຕໍ່ການຫັກລົ້ມທັບທາງ ເປັນສາເຫດໜຶ່ງທີ່ພາໃຫ້ເສັ້ນທາງເປເພເຍຫາຍ.

13. ຫ້າມວາງເຄື່ອງຂາຍ, ເຄື່ອງໝາຍ, ປະຖິ້ມທ່ອນໄມ້, ກ້ອນຫີນ ແລະ ສິ່ງກີດຂວາງຕາມທາງຫລວງ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງທາງຫລວງ.

14. ຫ້າມຈັດພິທີຕາມທາງຫລວງ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງ ໂຍທາທິການ ແລະ ຂົນສົ່ງ.

15. ຫ້າມເຄື່ອນຍ້າຍພາຫະນະຕີນເຫຼັກ ຫຼື ຄຣູນດ້ວຍໂສ້ແລ່ນເທິງໜ້າທາງປູຢາງ, ທາງປູເບຕົງ ຫຼື ໜ້າທາງອື່ນໆໂດຍບໍ່ມີການປ້ອງກັນໜ້າທາງ ເພື່ອບໍ່ໃຫ້ທາງມີການເສຍຫາຍ ແລະ ເປ່ເພ.

16. ຫ້າມລ້ຽງ, ປ່ອຍ ສັດລ້ຽງ ແລະ ເຄື່ອນຍ້າຍສັດລ້ຽງ ຕາມທາງຫລວງ ໂດຍບໍ່ມີຜູ້ຄວບຄຸມ.

17. ຫ້າມມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**III. ຂໍ້ຫ້າມສຳລັບ ວຽກງານ ເຄຫາ-ຜັງເມືອງ ແລະ ສິ່ງແວດລ້ອມ**

ໃຫ້ອຳນາດການປົກຄອງເມືອງ 4 ຕົວເມືອງ, ພະແນກການ-ອົງການທຽບເທົ່າ, ກົມກອງ 2 ກຳລັງ, ສະຖາບັນການສຶກສາ, ວິສະຫະກິດ, ອົງການຈັດຕັ້ງສັງຄົມ, ບ້ານ, ປະຊາຊົນ ໃນທຸກຂອບເຂດແຂວງເຊກອງ ປະຕິບັດຂໍ້ຫ້າມ ສຳລັບວຽກງານເຄຫາ-ຜັງເມືອງ ແລະ ສິ່ງແວດລ້ອມ ຕາມກົດໝາຍວ່າດ້ວຍການກໍ່ສ້າງ ສະບັບປີ 2009, ກົດໝາຍວ່າດ້ວຍການຜັງເມືອງ ( ສະບັບປັບປຸງ ) ສະບບປີ 2017, ລະບຽບການຄຸ້ມຄອງການປຸກສ້າງ ສະບັບປີ 2005 ແລະ ລະບຽບການວາງແຜນຜັງເມືອງ ສະບັບປີ 2006 ຢ່າງເຂັ້ມງວດ ຊຶ່ງສັງລວມມີຂໍ້ຫ້າມດັ່ງລຸ່ມນີ້:

1. ຫ້າມດຳເນີນທຸລະກິດກ່ຽວກັບ ການກໍ່ສ້າງ, ການສຳຫຼວດ-ອອກແບບ ແຜນຜັງຕົວເມືອງ ໂດຍບໍ່ມີໃບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ;

2. ຫ້າມກໍ່ສ້າງໃນເຂດທີ່ລະບຽບກົດໝາຍບໍ່ອະນຸຍາດ ເປັນຕົ້ນເຂດຍຸດທະສາດການທະຫານ, ເຂດວັດທຸບູຮານ, ສະຖານປະຫວັດສາດ, ເຂດມໍລະດົກທາງວັດທະນະທຳ, ເຂດປ່າສະຫງວນ, ຂອບເຂດສະຫງວນຂອງທາງຫຼວງ, ທາງລົດໄຟ, ບຶງ, ໜອງ, ຫ້ວຍ, ທົ່ງນາ, ລະບົບຊົນລະປະທານ, ເຂື່ອນພະລັງງານໄຟຟ້າ, ຂອບເຂດສະໜາມບິນ, ບໍລິເວນທີ່ພົວພັນເຖິງຄວາມປອດໄພຂອງສະໜາມບິນ, ເຂດປ້ອງກັນຕາຝັ່ງເຈື່ອນ.

3. ຫ້າມຂັດຂວາງການດຳເນີນການສຳຫຼວດ - ອອກແບບ ແຜນຜັງຕົວເມືອງ ໂດຍບໍ່ມີເຫດຜົນ, ບໍ່ອຳນວຍຄວາມສະດວກ ຫຼື ການຮ່ວມມື.

4. ຫ້າມກໍ່ສ້າງ, ສ້ອມແປງ, ຕໍ່ເຕີມ ແລະ ດັດແກ້ແບບຊະຊາຍ ໂດຍບໍ່ໄດ້ຮັບອະນຸຍາດ, ບໍ່ຖືກຕ້ອງ ແລະ ສອດຄ່ອງ ກັບແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນຜັງເມືອງ.

5. ຫ້າມນຳໃຊ້ທີ່ດິນທີ່ຂັດກັບກົດໝາຍວ່າດ້ວຍການຜັງເມືອງ.

6. ຫ້າມຂຸດດິນ, ຖົມດິນ ແລະ ການກໍ່ສ້າງຕ່າງໆ ຊຶ່ງເປັນການບຸກລຸກເຂດຫວງຫ້າມທີ່ກຳນົດໄວ້ຢູ່ໃນແຜນຜັງຕົວເມືອງ ແລະ ບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງຜັງເມືອງ

7. ຫ້າມດັດແປງສະພາບຕົວຈິງຂອງໜ້າດິນ, ສິ່ງປຸກສ້າງ ແລະ ສະພາບແວດລ້ອມທຳມະຊາດ ທີ່ຢູ່ໃນການຄຸ້ມຄອງ ແລະ ນຳໃຊ້ຂອງຕົນ ຊຶ່ງພາໃຫ້ມີການປ່ຽນແປງເຂດນຳໃຊ້ທີ່ດິນຕາມມາທີ່ກຳນົດໄວ້ໃນແຜນຜັງຕົວເມືອງ.

8. ຫ້າມຕັດຮອນ, ຕົບແຕ່ງຕົ້ນໄມ້, ງ່າໄມ້ ຕາມແຄມຖະໜົນຫົນທາງ ແລະ ສວນສາທາລະນະ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ.

9. ຫ້າມປ່ອຍນ້ຳເສຍ ແລະ ນ້ຳເປື້ອນລົງແຫລ່ງນ້ຳທຳມະຊາດ.

10. ຫ້າມຂົນສິ່ງວັດສະດຸກໍ່ສ້າງເປັນຕົ້ນ ດິນ, ຫີນແຮ່, ຫີນຝຸ ແລະ ຊາຍ ທີ່ສ້າງຄວາມເປິເປື້ອນໃສ່ໜ້າທາງ, ສະຖານທີ່ສາທາລະນະ ຫລື ສະຖານທີ່ຂອງຜູ້ອື່ນໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ.

11. ຫ້າມມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

IV. ມາດຕະການ ແລະ ວິທີການຈັດຕັ້ງປະຕິບັດ

1. ມອບໃຫ້ທ່ານຮອງເຈົ້າແຂວງ ຜູ້ຊີ້ນຳວຽກງານໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄອບຄຸມຊີ້ນຳການຈັດຕັ້ງປະຕິບັດຄຳສັ່ງ ສະບັບນີ້.

2. ມອບໃຫ້ ທ່ານ ເຈົ້າເມືອງ, ນາຍບ້ານ ເປັນເຈົ້າການ ສ້າງຂະບວນການອອກແຮງງານ ແລະ ອະນາໄມລວມໃຫ້ກຳນົດເອົາທຸກແລງຂອງວັນສຸກ ແລະ ວັນສຳຄັນຂອງຊາດ ຫລື ກຳນົດເອົາວັນໃດໜຶ່ງໃຫ້ເປັນວັນເຮັດຄວາມສະອາດຕົວເມືອງສະເພາະ ເພື່ອການສ້າງຈິດສຳນຶກໄປໃນໂຕ ແລະ ໃຫ້ເປັນຂະບວນຝຶກຝົນຢ່າງຕໍ່ເນື່ອງ.

3. ມອບໃຫ້ ທ່ານຫົວໜ້າພະແນກການ-ອົງການທຽບເທົ່າອ້ອມຂ້າງແຂວງເຊກອງ, ແນວລາວສ້າງຊາດແຂວງ, ອົງການຈັດຕັ້ງມະຫາຊົນຂັ້ນແຂວງ, ຜູ້ອຳນວຍການວິສະຫະກິດຕ່າງໆ, ບັນດາສະຖາບັນການສຶກສາເປັນຜູ້ຈັດຕັ້ງນຳພາຂະບວນການຮັກສາຄວາມສະອາດ, ການອະນາໄມຖະໜົນຫົນທາງ ແລະ ການຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຂອບເຂດຂອງຕົນ.

4. ໃຫ້ທຸກພາກສ່ວນຢູ່ໃນແຂວງເຊກອງ ຫັນເອົາວຽກງານຮັກສາຄວາມສະອາດ, ຈັດສັນຄວາມເປັນລະບຽບຮຽບຮ້ອຍ, ການປະດັບປະດາຕົວເມືອງ ເປັນກິດຈະການເຄື່ອນໄຫວ ແລະ ເປັນໜ້າທີ່ການເມືອງຂອງຕົນ, ທັງເປັນໄມ້ຫຼາວັດແທກຄວາມດີ, ຄວາມງາມ ຫຼື ເປັນທັງຈຸດອ່ອນ, ຂໍ້ບົກພ່ອງຂອງພາກສ່ວນຕົນ, ໂດຍມີການກວດກາ, ປະເມີນຜົນ ແລະ ໃຫ້ຄະແນນ "ຄວາມສະອາດ ແລະ ຄວາມເປັນລະບຽບຮຽບຮ້ອຍ" ໃນທຸກໆ 3 ເດືອນ, 6 ເດືອນ ແລະ 1 ປີ ຢ່າງເປັນປະຈຳ.

5. ມອບໃຫ້ຄະນະໂຄສະນາອົບຮົມແຂວງ, ພະແນກຖະແຫລ່ງຂ່າວ - ວັດທະນະທຳ ແລະ ທ່ອງທ່ຽວແຂວງ ອອກເອກະສານເພື່ອສຶກສາອົບຮົມປະຊາຊົນທົ່ວແຂວງເຊກອງ ພ້ອມທັງເຜີຍແຜ່, ປະຊາສຳພັນຄຳສັ່ງສະບັບນີ້ເພື່ອປຸກລະດົມປະຊາຊົນຊາວແຂວງເຊກອງ, ແຂກເມືອງໃຫ້ເຂົ້າຮ່ວມຂະບວນການຮັກສາຄວາມສະອາດ ແລະ ຄວາມເປັນລະບຽບຮຽບຮ້ອຍຕາມຖະໜົນຫົນທາງ ທົ່ວແຂວງເຊກອງຕາມຄຳສັ່ງສະບັບນີ້ໃຫ້ໄດ້ຮັບຜົນດີ.

6. ມອບໃຫ້ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ອົງການພັດທະນາ ແລະ ບໍລິຫານຕົວເມືອງ, ກອງບັນຊາການ ປກສ ແຂວງ ແລະ ພະແນກສາທາລະນະສຸກແຂວງ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ທັງເປັນຜູ້ຊ່ວຍທ່ານຮອງເຈົ້າແຂວງ, ເປັນອົງການຄຸ້ມຄອງ ແລະ ຮັບຜິດຊອບໂດຍກົງຕໍ່ຜົນໄດ້, ຜົນເສຍກ່ຽວກັບການຮັກສາອານາໄມ ແລະ ຄວາມເປັນລະບຽບຮຽບຮ້ອຍ ໃນທ້ອງຖະໜົນຕາມກົດໝາຍ ແລະ ນິຕິກຳລຸ່ມກົດໝາຍທີ່ກ່ຽວຂ້ອງໄດ້ກຳນົດແລ້ວ.

7. ທຸກອົງການຈັດຕັ້ງຂອງພັກລັດ, ເອກະຊົນ, ປະຊາຊົນຊາວແຂວງເຊກອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ຈັດຕັ້ງປະຕິບັດຄໍາສັ່ງສະບັບນີ້ ໃຫ້ເກີດຜົນເປັນຢ່າງດີ.

8. ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ປະຕິບັດຄໍາສັ່ງ ຈະໄດ້ຮັບການຍ້ອງຍໍ ແລະ ການປະຕິບັດນະໂຍບາຍ ຕາມຄວາມເໝາະສົມ ທີ່ໄດ້ກໍານົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

9. ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງໃດທີ່ລະເມີດຄໍາສັ່ງສະບັບນີ້ຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ປັບໄໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫລື ດໍາເນີນຄະດີຕາມກົດໝາຍທີ່ກ່ຽວຂ້ອງກໍານົດໄວ້ ແລ້ວແຕ່ລະກໍລະນີໜັກ ຫລື ເບົາ.

V. ຄໍາສັ່ງສະບັບນີ້ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ

ຄໍາເພີຍ ບຸດດາວຽງ

ບອນສົ່ງ

| | |
|---|---|
| ເຈົ້າແຂວງ ແລະ ຮອງເຈົ້າແຂວງ | 03 ສະບັບ |
| ສະພາປະຊາຊົນແຂວງ | 01 ສະບັບ |
| ທຸກພະແນກການ, ອົງການທຽບເທົ່າ ອ້ອມຂ້າງແຂວງ | 01 ສະບັບ |
| ເມືອງ 4 ເມືອງ | 01 ສະບັບ |
| ເກັບມ້ຽນ | 03 ສະບັບ |